**ປະທານປະເທດ**

**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ນະຄອນຫຼວງວຽງຈັນ, ວັນທີ      ກຸມພາ 2024

ສົມເດັດ,

ໃນນາມປະຊາຊົນລາວ ກໍ່ຄື ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍຖືເປັນກຽດສົ່ງຄຳຊົມເຊີຍອັນອົບອຸ່ນ ແລະ ພອນໄຊອັນປະເສີດ ມາຍັງ ສົມເດັດ ແລະ ປະຊາຊົນ ບຣູໄນ ເພື່ອນມິດ ເນື່ອງໃນໂອກາດວັນຊາດ ແຫ່ງ ບຣູໄນ ດາຣູຊາລາມ ຄົບຮອບ 40 ປີ.

ຂ້າພະເຈົ້າ ມີຄວາມຍິນດີເປັນຢ່າງຍິ່ງ ທີ່ເຫັນວ່າສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນໃກ້ຊິດ ລະຫວ່າງ ສອງປະເທດພວກເຮົາ ຕະຫຼອດໄລຍະຜ່ານມາ. ການຢ້ຽມຢາມທາງລັດຖະກິດຂອງ ສົມເດັດ ໃນເດືອນຕຸລາ 2023 ຜ່ານມາ ແລະ ການຍົກລະດັບການຮ່ວມມືສອງຝ່າຍຂອງພວກເຮົາຂຶ້ນເປັນ ຄູ່ຮ່ວມຍຸດທະສາດນັ້ນ ໄດ້ເປັນຂີດໝາຍອັນສຳຄັນໃນການສືບຕໍ່ເພີ່ມທະວີສາຍພົວພັນມິດຕະພາບ ແລະ ການຮ່ວມມື ອັນມີໝາກຜົນ ລາວ-ບຣູໄນ ໃຫ້ກ້າວເຂົ້າສູ່ລວງເລິກ ແລະ ນຳເອົາຜົນປະໂຫຍດຕົວຈິງ ມາສູ່ ປະຊາຊົນສອງຊາດພວກເຮົາ, ກໍ່ຄື ປະກອບສ່ວນເຂົ້າໃນພາລະກິດສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາ ຢູ່ໃນພາກພື້ນ ແລະ ໃນໂລກ.

ຂ້າພະເຈົ້າ ຂໍຖືໂອກາດອັນສະຫງ່າລາສີນີ້ ອວຍພອນໄຊອັນປະເສີດແດ່ ສົມເດັດ ແລະ ພະບໍລົມວົງສານຸວົງທຸກພະອົງ ຈົ່ງມີພະລານາໄມສົມບູນ, ມີພະກະເສມສຳລານ ແລະ ປະສົບຜົນສຳເລັດ ໃນພາລະກິດອັນມີກຽດສູງສົ່ງຂອງພະອົງ ແລະ ຂໍອວຍພອນໃຫ້ປະຊາຊົນ ບຣູໄນ ພາຍໃຕ້ພະບໍຣົມ ໂພທິສົມພານຂອງ ສົມເດັດ ຈົ່ງສືບຕໍ່ມີຄວາມກ້າວໜ້າ ແລະ ຈະເລີນຮຸ່ງເຮືອງຍິ່ງໆຂຶ້ນ.

ດ້ວຍຄວາມນັບຖືຢ່າງສູງ,

ທອງລຸນ ສີສຸລິດ

ສົມເດັດ ຊຸນຕານ ຮາຈີ ຮັດຊານານ ໂບນເກຍ
ແຫ່ງ ບຣູໄນ ດາຣູຊາລາມ
ທີ່ <u>ບັນດາ ເສຣີ ເບກາວັນ</u>